# ວິທະຍາໄລຣັຕນະບໍລິຫານທຸລະກິດ
# ຈັດຕັ້ງການເຜີຍແຜ່ການສົ່ງເສີມການນຳໃຊ້ເງິນກີບ





ໃນວັນທີ 9 ມັງກອນ ຜ່ານມານີ້ ວິທະຍາໄລຣັຕນະ ບໍລິຫານທຸລກິດ ແລະ ທະນາຄານແຫ່ງ ສປປ ລາວ ໄດ້ຮ່ວມກັນຈັດພິທີເຜີຍແຜ່ການສົ່ງເສີມການນຳໃຊ້ເງິນກີບຂຶ້ນທີ່ສະໂມສອນໃຫຍ່ ວິທະຍາໄລຣັຕນະ ນະຄອນຫຼວງວຽງຈັນ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ດຣ ສົມເພັດ ຣັຕນະ ຜູ້ອຳນວຍການໃຫຍ່ວິທະຍາໄລຣັຕນະ ປະທານສະມາຄົມການສຶກສາພາກເອກະຊົນ, ບັນດາຄະນະບໍລິຫານງານ-ຄູອາຈານ, ພະນັກງານຈາກທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍນັກສຶກສາເຂົ້າຮ່ວມ 300 ກວ່າຄົນ.

ໃນໂອກາດດັ່ງກ່າວທ່ານຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ກໍໄດ້ແຈ້ງໃຫ້ຮູ້ກ່ຽວກັບປະຫວັດຄວາມເປັນຂອງສະກຸນເງິນກີບ, ເຜີຍແຜ່ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ແລະ ລະບຽບການອື່ນໆກ່ຽວກັບການສົ່ງເສີມການນຳໃຊ້ເງິນກີບໃຫ້ຜູ້ເຂົ້າຮ່ວມໄດ້ຮັບຊາບ ພ້ອມທັງໄດ້ມີການປະກອບຄຳຄິດຄຳເຫັນ-ຊັກຖາມ ແລະ ໄດ້ຈັດກິດຈະກຳຫຼິ້ນເກມຖາມ-ຕອບກ່ຽວກັບການນຳໃຊ້ເງິນກີບ ແລະ ເງິນຕາຕ່າງປະເທດຢູ່ ສປປ ລາວ ໃນປະຈຸບັນ.

ຈາກນັ້ນທ່ານຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດ ກໍໄດ້ຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ມອບກະຕ່າດອກໄມ້ອວຍພອນຜູ້ອຳນວຍການໃຫຍ່ ພ້ອມທັງມອບປຶ້ມຂຽນ 100 ໜ້າ ຈຳນວນ 1.000 ຫົວ ແລະ ອື່ນໆທີ່ສະແດງເຖິງການສົ່ງເສີມການນຳໃຊ້ເງິນກີບ ໃຫ້ແກ່ວິທະຍາໄລດັ່ງກ່າວຕື່ມອີກ.